ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະຫະກອນອອມຊັບ-ສິນເຊື່ອ
ບໍລິສັດ ອີທີແອລ ຈໍາກັດ

ເລກທີ 182 /ສອສ
ນະຄອນຫຼວງວຽງຈັນ,ວັນທີ 16 DEC 2022

## ແຈ້ງການ

**ເຖິງ:** ຄະນະພະແນກ, ຄະນະຜູ້ອໍານວຍການ ອທອ ສາຂາແຂວງ.

**ເລື່ອງ:** ການອະນຸມັດເອກະສານເງິນກູ້ຂອງ ສະມາຊິກ ສອສ.

- ອີງຕາມ ລະບຽບຂອງສະຫະກອນອອມຊັບ-ສິນເຊື່ອ ອທອ ວ່າດ້ວຍການຄຸ້ມຄອງ ແລະ ບໍລິຫານສິນເຊື່ອ ສະບັບເລກທີ 087/ສອສ.ອທອ, ລົງວັນທີ 17/08/2015;
- ອີງຕາມ ການປະຕິບັດການກູ້ຢືມເງິນຂອງສະມາຊິກ ສອສ ໃນໄລຍະຜ່ານມາ.

ສະຫະກອນອອມຊັບ-ສິນເຊື່ອ ອທອ ຂໍຖືເປັນກຽດແຈ້ງມາຍັງ ຄະນະພະແນກ,ຄະນະອໍານວຍການ ອທອ ສາຂາແຂວງ ຊາບວ່າກ່ຽວກັບ ການພິຈາລະນາອະນຸມັດເອກະສານກູ້ເງິນ ຂອງພະນັກງານ ທີ່ຢູ່ພາຍໃນຄວາມຮັບຜິດຊອບຂອງຕົນ ກ່ອນຈະອະນຸມັດເອກະສານກູ້ຢືມໃຫ້ກວດກາຢ່າງລະອຽດຖີ່ຖ້ວນກ່ອນ ເນື່ອງຈາກວ່າປະຈຸບັນ ມີສະມາຊິກ ສອສ ຈໍານວນໜຶ່ງໄດ້ໄປກູ້ເງິນຈາກພາຍນອກ ໂດຍເອົາເງິນເດືອນຂອງຕົນເອງໄປຄໍ້າປະກັນ ເຊິ່ງເງິນເດືອນຄໍ້າປະກັນນັ້ນແມ່ນໄດ້ມີການຄໍ້າປະກັນກັບ ສອສ ເຊັ່ນດຽວກັນ, ເຊິ່ງຈະເຮັດສະມາຊິກທີ່ມາຂໍກູ້ຢືມນັ້ນ ກູ້ຢືມເກີນວົງເງິນເດືອນຄໍ້າປະກັນ ແລະ ອາດຈະເຮັດໃຫ້ ສອສ ເກີດຄວາມສ່ຽງໃນການເກັບກູ້ຕົ້ນທຶນ ແລະ ດອກເບ້ຍຄືນ, ສະນັ້ນ, ເພື່ອເຮັດໃຫ້ ສອສ ມີຄວາມສ່ຽງໜ້ອຍລົງ ຈຶ່ງຂໍຄວາມຮ່ວມມືມາຍັງຄະນະພະແນກ,ຄະນະອໍານວຍການ ອທອ ສາຂາແຂວງຊ່ວຍພິຈາລະນາກ່ຽວກັບຈໍານວນເງິນທີ່ສະມາຊິກຂໍກູ້ຢືມໃນກໍລະນີດັ່ງລຸ່ມນີ້:

1. ກໍລະນີສະມາຊິກ ສອສ ຜູ້ໃດມີສັນຍາກູ້ຢືມຈາກພາຍນອກທີ່ບໍ່ແມ່ນ ສອສ ໃຫ້ຫຼຸດຈໍານວນວົງເງິນກູ້ລົງ 30% ຂອງວົງເງິນທີ່ສາມາດກູ້ໄດ້ເຕັມ;
2. ກໍລະນີສະມາຊິກຜູ້ໃດບໍ່ມີສັນຍາກູ້ຢືມກັບພາຍນອກ ແມ່ນອະນຸມັດວົງເງິນໃຫ້ເຕັມຕາມຈໍານວນວົງເງິນເດືອນຄໍ້າປະກັນ;
3. ກໍລະນີສະມາຊິກຜູ້ໃດທີ່ມີສັນຍາກູ້ຢືມກັບພາຍນອກແຕ່ບໍ່ແຈ້ງ ສອສ ແຕ່ມາຂໍກູ້ຢືມວົງເງິນເຕັມຈໍານວນເງິນເດືອນຂອງຕົນຄໍ້າປະກັນ ຖ້າ ສອສ ກວດພົບເຫັນຈະໄດ້ດໍາເນີນການປະຕິບັດວິໄນຕາມລະບຽບຂອງ ສອສ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຜູ້ອໍານວຍການ ສອສ

ໄຊສົມພາຍ ສີສໍາພັນໄຊ